Paid Leave Oregon

# ແຜນທຽບເທົ່າ

ໂຄງການໃໝ່ເຊິ່ງຈະຊ່ວຍໃຫ້ຄົນງານໃນລັດອໍເຣກອນ ໄດ້ຮັບການລາພັກແບບ ມີຄ່າແຮງ ເມື່ອຈຳເປັນມີເຫດການສຳຄັນເກີດຂຶ້ນໃນຊີວິດເຊິ່ງຈະກະທົບເຖິງ ຄອບຄົວ, ສຸຂະພາບ ແລະຄວາມປອດໄພຂອງພວກເຮົາ.

## ແຜນທຽບເທົ່າແມ່ນຫຍັງ?

ນາຍຈ້າງອາດສະຫນອງແຜນການລາພັກແບບມີຄ່າແຮງທີ່ ທຽບເທົ່າ ສຳລັບພະນັກງານຂອງພວກເຂົາ ເຊິ່ງຖືເປັນທາງເລືອກຫນຶ່ງເພື່ອເຂົ້າຮ່ວມໃນໂຄງການການລາພັກແບບມີຄ່າແຮງຂອງລັດອໍເຣກອນ.

## ຂໍ້ກຳນົດທົ່ວໄປຂອງແຜນທຽບເທົ່າມີຫຍັງແນ່?

ແຜນທຽບເທົ່າຕ້ອງ:

- ຄຸ້ມຄອງພະນັກງານທັງຫມົດຜູ້ທີ່ເຂົ້າເຮັດວຽກກັບ ນາຍຈ້າງຕິດຕໍ່ກັນເປັນເວລາຢ່າງຫນ້ອຍ 30 ມື້.
- ຮັບປະກັນວ່າການປະກອບສ່ວນໃນກອງທຶນຂອງພະນັກງານບໍ່ກາຍຈຳນວນທີ່ຈະຕ້ອງຈ່າຍພາຍໃຕ້ແຜນການຂອງລັດ.
- ສະຫນອງຜົນປະໂຫຍດທີ່ເທົ່າກັບ ຫຼື ຫຼາຍກວ່າຜົນປະໂຫຍດໄດ້ຈາກແຜນການຂອງລັດ, ລວມມີ:

    1. ອະນຸຍາດໃຫ້ລາພັກດ້ວຍເຫດຜົນເພື່ອດູແລຄອບຄົວ, ການແພດ ແລະ ການລາພັກເພື່ອຄວາມປອດໄພ
    2. ໃຫ້ພັກໄດ້ເຖິງ 12 ອາທິດຂອງການລາພັກແບບໄດ້ຮັບຄ່າຈ້າງ ຕໍ່ປີ (ບວກກັບສອງ ອາທິດເພີ່ມເຕີມເມື່ອຈຳເປັນຕ້ອງ ລາພັກຍ້ອນສຸຂະພາບກ່ຽວຂ້ອງກັບການຖືພາ)
    3. ອະນຸຍາດໃຫ້ພະນັກງານລາພັກແບບໄດ້ຮັບຄ່າຈ້າງ ເທື່ອລະຫນຶ່ງມື້ ຫຼື ຫຼາຍມື້ຕິດຕໍ່ກັນ
    4. ບໍ່ມີເງື່ອນໄຂ ຫຼື ຂໍ້ຈຳກັດເພີ່ມເຕີມ ໃນການນຳໃຊ້ການລາພັກແບບໄດ້ຮັບຄ່າຈ້າງຂອງພະນັກງານ

## ເມື່ອໃດຂ້າພະເຈົ້າຈະສາມາດຍື່ນຄຳຮ້ອງຂໍແຜນທຽບເທົ່າບໍ?

ນາຍຈ້າງສາມາດເລີ່ມຍື່ນຄຳຮ້ອງໃນເດືອນກັນຍາ ປີ2022.

ພວກເຮົາຄາດວ່າຂະບວນການພິຈາລະນາຈະໃຊ້ເວລາຢ່າງຫນ້ອຍ 30 ວັນ.

## ການຍື່ນຄຳຮ້ອງຈະມີຄ່າໃຊ້ຈ່າຍເລີ່ມຕົ້ນເທົ່າໃດ?

ຄ່າທຳນຽມໃນການຍື່ນຄຳຮ້ອງ ສຳລັບແຜນທຽບເທົ່າສະບັບໃຫມ່ ແມ່ນ $250.

## ປະເພດຂອງແຜນການທຽບເທົ່າທີ່ນາຍຈ້າງອາດມີໃຫ້ມີອັນໃດແນ່?

- ແຜນທຽບເທົ່າທີ່ນາຍຈ້າງບໍລິຫານຄຸ້ມຄອງ - ນາຍຈ້າງຮັບຜິດຊອບຄວາມສ່ຽງດ້ານການເງິນທັງຫມົດທີ່ກ່ຽວຂ້ອງກັບ ຜົນປະໂຫຍດ ແລະການບໍລິຫານແຜນທຽບເທົ່າ, ບໍ່ວ່າແຜນຈະຖືກບໍລິຫານໂດຍນາຍຈ້າງ ຫຼື ບຸກຄົນທີສາມກໍ່ຕາມ.
- ແຜນທຽບເທົ່າທີ່ໄດ້ຮັບການຄຸ້ມຄອງເຕັມຮູບແບບ - ນາຍຈ້າງຊື້ນະໂຍບາຍປະກັນໄພໃດຫນຶ່ງ ຈາກ ບໍລິສັດປະກັນໄພ ແລະ ຜົນປະໂຫຍດກ່ຽວຂ້ອງກັບແຜນແມ່ນຖືກບໍລິຫານໂດຍຜ່ານນະໂຍບາຍປະກັນໄພນັ້ນ.

## ນາຍຈ້າງສາມາດສະຫນອງແຜນທຽບເທົ່າໃຫ້ກັບພະນັກງານ ບາງຄົນ ແຕ່ບໍ່ແມ່ນທັງຫມົດໄດ້ ຫຼື ບໍ່?

ບໍ່, ນາຍຈ້າງຕ້ອງສະຫນອງການຄຸ້ມຄອງພາຍໃຕ້ແຜນທຽບເທົ່າໃຫ້ກັບພະນັກງານຫມົດທຸກຄົນພ້າຍໃຕ້ເລກລະຫັດ ປະຈຳທຸລະກິດຂອງນາຍຈ້າງ (BIN).

## ນາຍຈ້າງຕ້ອງໄດ້ຍື່ນຂໍອະນຸມັດໃຫມ່ສຳລັບແຜນທຽບເທົ່າຂອງເຂົາເຈົ້າຫຼືບໍ່?

ແມ່ນ. ນາຍຈ້າງ ຈະຕ້ອງໄດ້ຍື່ນຂໍອະນຸມັດ ປະຈຳປີອີກເທື່ອໃຫມ່, ສຳລັບສາມປີທຳອິດເທົ່ານັ້ນ. ຫຼັງຈາກສາມປີຜ່ານໄປ, ນາຍຈ້າງບໍ່ຈຳເປັນຕ້ອງຍື່ນຂໍອະນຸມັດອີກ ແລະແຜນທຽບເທົ່າຂອງເຂົາເຈົ້າຈະຍັງຄົງຖືກນຳໃຊ້ຈົນກວ່າຈະຖອນອອກ ຫຼື ຖືກຍົກເລີກ.

## ຮຽນຮູ້ເພີ່ມເຕີມ.

ເຂົ້າເບິ່ງໄດ້ທີ່ *paidleave.oregon.gov* ແລະລົງທະບຽນສຳລັບການ*ອັບເດດທາງອີເມລ*.

ອີເມລເຖິງພວກເຮົາທີ່ *paidleave@oregon.gov*.

ໂທຫາພວກເຮົາໄດ້ທີ່ເບີ 833-854-0166.